# ບົດທີ 8

# ຄຳອ້ອນວອນສ່ວນຕົວ




**1** ຄຳອ້ອນວອນຕາມແບບໃຊ້ໄດ້ໃນເວລາຈະອ້ອນວອນເປັນໝູ່ແຕ່ວ່າບາງເທື່ອເຮົາຈະອ້ອນວອນຜູ້ດຽວກໍ່ມີ.ໃຫ້ ທ່ານອ່ານ ມທ 6:6 ກ່ອນ. ຂໍ້ນັ້ນຕົກກ່ອນຄຳອ້ອນວອນຕາມແບບທີ່ພະເຢຊູສອນຫຼື ທີຫຼັງ? ____________________________________________

ຕາມຄຳສອນໃນຂໍ້ນັ້ນມີລາງເທື່ອທີ່ເຮົາຄວນຈະອ້ອນວອນກັບໃຜ? ເລືອກໝາຍເອົາຂໍ້ທີ່ຖືກ.

ກ. ຜູ້ດຽວ. ຂ. ກັບໝູ່. ຄ. ກັບນັກເທດ.

**2** ກ. ມັດທາຍ 6:6 ບອກໃຫ້ເຂົ້າໃນຫ້ອງແລ້ວອັດປະຕູໄວ້ ແຕ່ບາງເທື່ອບໍ່ມີທີ່ຈະເຂົ້າໃນຫ້ອງໄດ້. ໃນມາລະໂກ 1:35 ພະເຢຊູລຸກຂຶ້ນຕອນໃດເພື່ອອ້ອນວອນຜູ້ດຽວໄດ້? ___________

ຂ. ພະອົງໄປໃສຈຶ່ງພົບບ່ອນງຽບສະຫງັດ? ______________________________

**3** ຖ້າຫາກວ່າພວກເຮົາຈະເຮັດຕາມຄຳສັ່ງສອນແລະຕົວຢ່າງຂອງພະເຢຊູຈຳເປັນຕ້ອງຊອກຫາບ່ອນສະຫງົບຢ່າງ ນັ້ນ. ຖ້າທ່ານຢູ່ໃນເມືອງ ຫຼື ຢູ່ໃນເຮືອນຄັບແຄບອາດຈະປິດປະຕູຢູ່ໃນຫ້ອງຜູ້ດຽວບໍ່ໄດ້ແຕ່ເປັນຢ່າງໃດກໍ່ ຕາມທ່ານຄວນຈະຊອກຫາບ່ອນໜຶ່ງບ່ອນໃດທີ່ບໍ່ມີການລົບກວນ. ທຸກຄົນຄວນຈະຫາໂອກາດອ້ອນວອນຢ່າງໃດ? ______________________

**4** ໃນແຕ່ລະມື້ມີບາງຕອນທີ່ຢູ່ຜູ້ດຽວຍາກມີບາງຕອນຢາກນອນດັ່ງນັ້ນເຮົາຄວນຈະເລືອກບ່ອນອ້ອນວອນແລະ ເລືອກເວລາອ້ອນວອນອີກດ້ວຍ. ແຕ່ລະຄົນອາດຈະຕ່າງກັນໄປບາງຄົນຕັ້ງສະຕິດີຕອນເຊົ້າບາງຄົນຕັ້ງສະຕິດີຕອນແລງ. ໃນ 3 ຄົນຕໍ່ໄປນີ້ແມ່ນຄົນໃດທີ່ຈະຕັ້ງສະຕິດີກວ່າ: (ເລືອກໝາຍເອົາຂໍ້ທີ່ຖືກ)

ກ. ຄົນທີ່ກິນເຂົ້າຄາບໃຫຍ່ຈຶ່ງໄປອ້ອນວອນ.

ຂ. ຄົນທີ່ອ້ອນວອນຕອນເຊົ້າຫຼັງຈາກລ້າງໜ້າ.

ຄ. ຄົນທີ່ອ້ອນວອນຕອນເດິກເວລາເມື່ອຍ.

**5** ດັ່ງນັ້ນຖ້າວ່າເຮົາຈະອ້ອນວອນປະຈຳວັນເໝາະສົມ...

ກ. ທີ່ຈະຫາສະຖານທີ່ຢ່າງໃດ? ______________________________

ຂ. ທີ່ຈະຫາເວລາແລະອາລົມຢ່າງໃດ? ______________________________

**6** ຂໍໃຫ້ອ່ານ ລູກາ 6:12

ກ. ເທື່ອນັ້ນ ພະເຢຊູອ້ອນວອນດົນປານໃດ? ______________________________

ຂ. ພະເຢຊູຟ້າວອ້ອນວອນໃຫ້ສຳເລັດບໍ່? ______________________________

**7** ໃນຕົວຢ່າງຊີວິດສະຕຽນ 3 ຄົນຕໍ່ໄປນີ້ແມ່ນຄົນໃດທີ່ຟ້າວອ້ອນວອນ? ໃຫ້ໝາຍເອົາຂໍ້ທີ່ຖືກ

ກ. ແມ່ທີ່ອ້ອນວອນພ້ອມດ້ວຍແຕ່ງເຂົ້າເຊົ້າໃຫ້ລູກກ່ອນຈະໄປເຂົ້າໂຮງຮຽນ.

ຂ. ນັກສຶກສາອ້ອນວອນກ່ອນໄປໂຮງຮຽນແຕ່ເພິ່ນນອນຕື່ນສວາຍຢູ່ສະເໝີ.

ຄ. ຜູ້ທີ່ຕັ້ງໃຈລຸກຂຶ້ນທັນເວລາເພື່ອມີເວລາອ້ອນວອນກ່ອນຈະເຂົ້າວຽກ.

**8** ນອກຈາກຊອກຫາສະຖານທີ່ສະຫງົບດີແລະຊອກຫາເວລາທີ່ເຮົາຕັ້ງສະຕິດີ ຍັງອີກປະການໜຶ່ງທີ່ສຳຄັນຄື: ຈົ່ງ ຊອກຫາເວລາທີ່ບໍ່ຟ້າວຟັ່ງ. ຄັນທ່ານຈະແນະນຳຄົນໃນການອ້ອນວອນປະຈຳວັນຈະເນັ້ນຄຳສາມປະການໃດ? ______________________________

______________________________________________________________

ຝຶກ: ໃຫ້ທ່ານຕອບຄຳຖາມຕໍ່ໄປນີ້ ຕາມພຶດຕິການຂອງທ່ານເອງແລ້ວທ່ານມາປຶກສາຫາລືກັນໃນປະຊຸມເທື່ອໜ້າ.

1. ທ່ານເອງມີສະຖານທີ່ໃດທີ່ເໝາະສົມເພື່ອການອ້ອນວອນສ່ວນຕົວ ? _______
2. ມີເວລາໃດໃນມື້ທີ່ທ່ານບໍ່ຟ້າວຟັ່ງ ແລະ ທີ່ຕັ້ງສະຕິດີ ? _____________

*ທ່ານໄດ້ເລືອກສະຖານທີ່ ແລະເວລາເໝາະສົມເພື່ອການອ້ອນວອນນັ້ນ!*
*ທ່ານຈະປະຕິບັດຕາມບໍ່ ?*

**9** ຄຳຮ້ອງຂໍປະການທີສາມໃນຄຳອ້ອນວອນຕາມແບບທີ່ທ່ານຮຽນມາໃນບົດກ່ອນຄຳນັ້ນຮ້ອງຂໍເພື່ອໃຫ້ ນ້ຳພະໄທຂອງໃຜສຳເລັດ? ______________________________

**10** ການຊອກຫານ້ຳພະໄທຂອງພະອົງເປັນເງື່ອນໄຂທີ່ສຳຄັນກ່ອນພະເຈົ້າຈະຕອບຄຳອ້ອນວອນຂອງເຮົາ. (ເລືອກ)

ກ. ເຮົາຄວນຈະອ້ອນວອນຕາມໃຈເຮົາເອງ.

ຂ. ເຮົາຄວນຈະອ້ອນວອນຊອກຫາຕາມນ້ຳພະໄທຂອງ ພະເຈົ້າ.

ຄ. ເຮົາຄວນຈະອ້ອນວອນກົງກັນຂ້າມຈາກນ້ຳໃຈຂອງເຮົາເອງ.

**11** ຂໍໃຫ້ອ່ານ 1 ໂຢຮັນ 5:14-15
(ບໍ່ແມ່ນຂ່າວປະເສີດ ໂຢຮັນແຕ່ຈົດໝາຍຂອງໂຢຮັນສະບັບຕົ້ນ)

ກ. ໃນຂໍ້ 14 ຖ້າເຮົາຂໍສິ່ງໜຶ່ງໃດຕາມນ້ຳພະໄທຂອງ ພະອົງຈະເປັນຢ່າງໃດ?

______________________________

ຂ. ໃນຂໍ້ 15 ຖ້າເຮົາຮູ້ວ່າພະອົງຟັງແລ້ວຈະເປັນຢ່າງໃດກັບສິ່ງທີ່ເຮົາຂໍນັ້ນ?

______________________________

**12** ເມື່ອເວລາເຮົາຈະອ້ອນວອນຄວນຈະຊອກຫາຫຍັງກ່ອນ? ______________________________

**13** ໃນບົດຮຽນກ່ອນນັ້ນເປັນຫຍັງເຮົາຄວນຈະຊອກຫານ້ຳພະໄທຂອງພະອົງໃຫ້ສຳເລັດແທນທີ່ຈະເອົາຕາມໃຈເຮົາ ເອງ? ______________________________

**14** ໃຫ້ອ່ານ ຢາໂກໂບ 1:6 ຖ້າເຮົາຢາກໄດ້ຮັບຕາມຄຳອ້ອນວອນ:

ກ. ໃຫ້ທູນຂໍດ້ວຍຫຍັງ? ______________________________

ຂ. ຢ່າໃຫ້ມີໃຈຢ່າງໃດ? ______________________________

**15** ໃຫ້ທ່ານເປີດ ມັດທາຍ 21:22 ຂໍ້ພະຄຳພີນີ້ເວົ້າເລື່ອງດຽວກັນກັບໃນ ໂຢໂກໂບ 1:6

ກ. ຕ້ອງອ້ອນວອນດ້ວຍມີຄວາມຫຍັງ? ______________________________

ຂ. ຖ້າອ້ອນວອນຢ່າງນັ້ນຈະເປັນຢ່າງໃດ? ______________________________

**16** ຄຳສັນຍານັ້ນຄືດີເລີດແຕ່ຈິ່ງໃຫ້ເຮົາເຂົ້າໃຈຄວາມໝາຍກ່ອນເນີ! ບໍ່ແມ່ນວ່າເຮົາຢາກໄດ້ສິ່ງໃດໆ ເຮົາ ຂໍແລ້ວຈະໄດ້ທັນທີດອກ. ເຮົາຈິ່ງຂໍເອົາແຕ່ຕາມ ______________________________ ຂອງ ______________________________ ຈິ່ງຈະສຳເລັດ. (ຈົ່ງຕື່ມຄວາມທີ່ຂາດ)

**17** ແນ່ນອນວ່າພະເຈົ້າສາມາດທີ່ຈະເອົາສິ່ງຂອງໃຫ້ຕາມໃຈຕົວເຮົາເອງແຕ່ຖ້າຈະຂໍຕາມເງື່ອນໄຂໃນຄຳສັນຍາ ເຫຼົ່າຄວາມຮ້ອງຂໍຂອງເຮົາຕ້ອງຖືກກັບ ______________________________ ຂອງ ______________________________ (ຈົ່ງຕື່ມຄວາມທີ່ຂາດ)

**18** ຄຳອ້ອນວອນໃດທີ່ເກີດດອກອອກຜົນເປັນອັນທີ່ ຊອກຫາແຕ່ນ້ຳພະໄທຂອງພະເຈົ້າດ້ວຍເຊື່ອພ້ອມວ່ານ້ຳ ພະ ໄທນັ້ນ. ເພື່ອຈະຮັບສິ່ງທີ່ຂໍເຮົາຕ້ອງມີທ່າທີສະແດງອອກແບບໃດ? ______

________________________________________________________________

**19** ໃນສາມຄົນຕໍ່ໄປນີ້ ໃຫ້ທ່ານເລືອກວ່າແມ່ນຄົນໃດທີ່ອ້ອນວອນພ້ອມດ້ວຍເຊື່ອວ່າຈະໄດ້ຕາມນ້ຳພະໄທຂອງພະອົງ.

ກ. "ຂ້ອຍຂໍໃຫ້ ພະເຈົ້າ ແກ້ບັນຫາໃຫ້ ແຕ່ປານນີ້ບໍ່ເຫັນແກ້ໄຂເທື່ອ"

ຂ. "ຂ້ອຍຂໍໃຫ້ພະເຈົ້າແກ້ບັນຫາແລ້ວເຊື່ອແນ່ນອນວ່າພະອົງຈະແກ້ໄຂຢ່າງດີຕາມນ້ຳພະໄທຂອງພະອົງ"

ຄ. "ຂ້ອຍຂໍເງິນຈາກພະເຈົ້າຈຶ່ງຈະແກ້ໄຂບັນຫາ ຕາມ ມທ 21:22 ຂ້ອຍຮູ້ແນ່ນອນວ່າຈະໄດ້ຮັບເງິນຕາມ ທີ່ຂໍ"

**20** ກ. ເມື່ອໃດທີ່ເຮົາອ້ອນວອນເຮົາຄວນຈະຂໍໃຫ້ສຳເລັດຕາມຫຍັງ? __________________

ຂ. ຄວນຈະອ້ອນວອນດ້ວຍມີທ່າທີໃດ? ______________________________________

**21** ໃນຕົ້ນບົດຮຽນນີ້ເຮົາໄດ້ຮຽນສາມຈຸດທີ່ເປັນຜົນປະໂຫຍດຊ່ອຍໃຫ້ເຮົາສາມາດອ້ອນວອນໄດ້ດີຄືຫຍັງ? (ຕື່ມຄວາມ)

ກ. ອ້ອນວອນໃນສະຖານທີ່ _____________________________________________

ຂ. ຈົ່ງຊອກຫາເວລາທີ່ເຮົາຕັ້ງ ___________________________________________

ຄ. ຄວນຫາເວລາທີ່ບໍ່ _________________________________________________

**22** ໃນ ລູກາ 18:1-8 ມີຄຳອຸປະມາເລື່ອງຄຳອ້ອນວອນ. ໃຫ້ທ່ານເປີດອ່ານຕະຫຼອດ ຂໍ້ 1 ນັ້ນບອກວ່າຄວນຈະ ໄຫວ້ວອນຢູ່ສະເໝີບໍ່ໃຫ້ເປັນຫຍັງ? ____________________________

**23** ແທນທີ່ຈະເລີກບໍ່ອ້ອນວອນຕໍ່ໄປຂໍ້ນັ້ນບອກບໍ່ໃຫ້ອ່ອນກຳລັງໃຈ.ຄຳນັ້ນໝາຍຄວາມວ່າເຮົາຈະເຮັດຢ່າງໃດ? ເລືອກ ກ. ຍົກສະເໜີບັນຫາຕໍ່ພະເຈົ້າເທື່ອດຽວແລ້ວກໍ່ແລ້ວໄປ.

ຂ. ອ້ອນວອນໄປຈົນກວ່າພະເຈົ້າຈະຕອບ.

ຄ. ຖ້າວ່າບໍ່ເຫັນພະເຈົ້າຕອບທັນທີເລີກບໍ່ອ້ອນວອນຕໍ່ໄປ.

**24** ພະເຢຊູ ຍົກຄຳອຸປະມານັ້ນມາສອນວ່າເຮົາຄວນຈະອ້ອນວອນຢູ່ເລື້ອຍໆ ຈົນກວ່າເຫັນພະເຈົ້າຕອບ. ຕາມຂໍ້ 6ນັ້ນຕຸລາການ (ຜູ້ພິພາກສາ) ເປັນຄົນຢ່າງໃດ? ເລືອກໝາຍເອົາຂໍ້ທີ່ຖືກ.

ກ. ບໍ່ຍຸດຕິທຳ. ຂ. ຍຸດຕິທຳດີ. ຄ. ພໍປານກາງ.

**25** ເຖິງຕຸລາການຄົນນັ້ນເປັນຄົນບໍ່ຍຸດຕິທຳກໍ່ຕາມແຕ່ຜົນສຸດທ້າຍເພິ່ນໃຫ້ການຍຸດຕິທຳແກ່ນາງເພາະເຫດໃດ? (ອ່ານໃນຂໍ້ 5 ແລ້ວຕື່ມຄວາມທີ່ຂາດ)

"ເພາະແມ່ໝ້າຍຄົນນັ້ນມາກວນໃຈເຮົາ, ເຮົາຈະໃຫ້ຄວາມຍຸດຕິທຳແກ່ນາງຢ້ານວ່ານາງຈະ

________________________________ ເຮັດໃຫ້ເຮົາເສຍກຳລັງໃຈ"

**26** ປາກົດວ່າ ເຖິງຕຸລາການຄົນນັ້ນບໍ່ຢຳເກງ ພະເຈົ້າແລະບໍ່ນັບຖືມະນຸດກໍ່ຕາມແຕ່ຜົນສຸດທ້າຍນາງນັ້ນໄດ້ຮັບຄວາມ ຍຸດຕິທຳເພາະເຫດໃດ? (ເລືອກໝາຍເອົາຂໍ້ທີ່ຖືກ)

ກ. ໃຫ້ສິນບົນ. ຂ. ຂໍຈາກເທວະດາ. ຄ. ຂໍຢູ່ເລື້ອຍໆຈົນໄດ້.

**27** ແຕ່ຄຼິດສະຕຽນເຮົາຂໍເອົາຈາກ ພະເຈົ້າແທນທີ່ຂໍເອົາຈາກຕຸລາການ. ພະເຈົ້າມີລັກສະນະຢ່າງໃດ? (ເລືອກ)

ກ. ຍຸດຕິທຳ. ຂ. ບໍ່ຍຸດຕິທຳ. ຄ. ປານກາງ.

**28** ກ. ແມ່ໝ້າຍຂໍໄດ້ຈາກຕຸລາການຜູ້ບໍ່ຍຸດຕິທຳເພາະຂໍຢ່າງໃດ? ____________________

ຂ. ແຕ່ພະຜູ້ເປັນເຈົ້າເປັນອົງຊອບທຳແລະຍຸດຕິທຳຈຶ່ງຜູ້ທີ່ຂໍຈາກພະອົງຈະໄດ້ຖ້າວ່າຂໍຢ່າງໃດ?

____________________________________________________________

**29** ນີ້ໝາຍຄວາມວ່າຄຼິດສະຕຽນເຮົາຈຶ່ງຂໍຢູ່ເລື້ອຍໆຈົນໄດ້ເຊັ່ນດຽວກັນກັບແມ່ໝ້າຍນັ້ນ. ຕາມຄຳອຸປະມານັ້ນເຮົາ ຄວນຈະອ້ອນວອນຕາມນ້ຳພະໄທຂອງພະອົງຫຼາຍປານໃດ? __________

**30** ໃຫ້ພາກັນທວນຄືນເທາະ

ກ. ເຮົາຄວນອ້ອນວອນຫາພະເຈົ້າຕາມຫຍັງ? ______________________________

ຂ. ດ້ວຍມີທ່າທີໃດ? ______________________________________________

ຄ. ອ້ອນວອນຫຼາຍປານໃດ? __________________________________________

**31** ເຖິງວ່າເຮົາຈະຮຽນວິທີອ້ອນວອນຕາມລຳດັບເຫຼົ່ານັ້ນກໍ່ຕາມ ຖ້າວ່າເຮົາຈະອ້ອນວອນປະການສຳຄັນທີ່ສຸດເຮົາ ຕ້ອງອ້ອນວອນດ້ວຍໃຈຈິງສິ່ງທີ່ເຮົາຮຽນມາແລ້ວເປັນປະໂຫຍດແຕ່ສະເພາະເມື່ອເວລາເຮົາຈະປະຕິບັດຕາມດ້ວຍໃຈສັດຊື່. ໃຫ້ທ່ານອ່ານ ໂລມ 8:26 ຄັນຖ້າວ່າເຮົາບໍ່ຮູ້ຈັກວ່າຈະອ້ອນວອນຢ່າງໃດຈຶ່ງຈະຖືກແມ່ນໃຜຊ່ອຍອ້ອນວອນແທນພວກເຮົາ? ___________

**32** ໃນຄຳເວົ້າສາມປະການຕໍ່ໄປນີ້ ຄຳໃດຖືກທີ່ສຸດ? (ໃຫ້ໝາຍເອົາຂໍ້ນັ້ນ)

ກ. ພະວິນຍານອ້ອນວອນເພື່ອເຮົາແຕ່ສະເພາະເມື່ອປະຊຸມກັນ.

ຂ. ພະວິນຍານອ້ອນວອນເພື່ອເຮົາແຕ່ສະເພາະເມື່ອເຮົາອ່ອນກຳລັງລົງ.

ຄ. ພະວິນຍານອ້ອນວອນເພື່ອເຮົາຢູ່ສະເໝີເຖິງບໍ່ຕ້ອງການກໍ່ຕາມ.

**33** ຕອນທີ່ເຮົາຈະເລີ້ມຕົ້ນອ້ອນວອນ ເຮົາຄວນຂໍຈາກ ____________________________ ມາຊ່ວຍໃຫ້ອ້ອນວອນ ຕາມນ້ຳພະໄທຂອງພະອົງ. (ຕື່ມຄວາມທີ່ຂາດ)

**34** ເຮົາຈະຂໍໃຫ້ ພະວິນຍານບໍລິສຸດຊ່ອຍອ້ອນວອນຕາມຫຍັງ? ____________________

**35** ຖ້າວ່າເຮົາຈະອ້ອນວອນ ຄວນອ້ອນວອນຢ່າງໃດຕໍ່ໄປນີ້:

ກ. ຕາມນ້ຳພະໄທຂອງໃຜ? ___________________________________________

ຂ. ຈຶ່ງມີທ່າທີຢ່າງໃດ? ______________________________________________

ຄ. ຈຶ່ງອ້ອນວອນຫຼາຍເທົ່າໃດ? ________________________________________

ງ. ຈະຂໍໃຫ້ໃຜມາຊ່ວຍອ້ອນວອນ? ________________________________________

**36** ເພື່ອຈະໄດ້ອ້ອນວອນດ້ວຍບໍ່ມີສິ່ງໃດຂັດຂວາງເຮົາຈະຊອກຫາຫຍັງ?

ກ. ________________________________________

ຂ. ________________________________________

ຄ. ________________________________________

**37** ຖ້າວ່າຈະອ້ອນວອນຢ່າງຖືກຕ້ອງຈົ່ງອ້ອນວອນ... (ຕື່ມຄວາມທີ່ຂາດ)

ກ. ຕາມ ________________________________________

ຂ. ດ້ວຍມີ ________________________________________

ຄ. ຈົນເຖິງ ________________________________________

ງ. ດ້ວຍການຂໍ ________________________________ ມາຊ່ວຍ.

*ຂໍໃຫ້ທ່ານຮັບພິຈາລະນາວ່າຕ້ອງການໃຫ້ ພະວິນຍານຂອງພະເຈົ້າມາຊ່ວຍອ້ອນວອນຫຼືບໍ່? ຖ້າຕ້ອງການໃຫ້ຂໍເອົາສາ!*

ໃຫ້ທ່ານກັບໄປເບິ່ງໜ້າປົກບົດນີ້ ທ່ານຈະຕອບພວກເຂົາແຕ່ລະຄົນຢ່າງໃດ? ໃຫ້ຍົກເວົ້າເລື່ອງນີ້ໃນປະຊຸມເທື່ອໜ້າ.

## *ຢ່າລືມຕອບບົດເສັງເລີຍເດີ!*

**ຄຳຕອບ:**

**1** *ກ່ອນ. ກ. ຖືກ*

**2** *ກ. ກ່ອນຮຸ່ງເຊົາ. ຂ. ປ່າ.*

**3** *ຄຳອ້ອນວອນຜູ້ດຽວ (ທີ່ບໍ່ມີຫຍັງລົບກວນ)*

**4** *ຂ. ຖືກ.*

**5** *ກ. ສະຫງົບ. ຂ. ຕັ້ງສະຕິ (ບໍ່ຢາກນອນກໍ່ໄດ້)*

**6** *ກ. ຕະຫຼອດຄືນ. ຂ. ບໍ່ຟ້າວຟັ່ງ.*

**7** *ກ. ແລະ ຂ. ຟ້າວ*

**8** *ຊອກຫາບ່ອນສະຫງົບ, ຊອກຫາເວລາທີ່ ມີສະຕິດີ ແລະຊອກຫາເວລາບໍ່ຟ້າວຟັ່ງ.*

**9** *ຂອງ ພະເຈົາ.*

**10** *ຂ. ຖືກ*

**11** *ກ. ພະອົງຟັງພວກເຮົາ. ຂ. ໄດ້ຮັບສິ່ງທີ່ເຮົາຂໍຈາກພະອົງ.*

**12** *ນ້ຳພະໄທຂອງ ພະເຈົາ.*

**13** *ເພາະພະອົງຮູ້ຈັກສິ່ງທີ່ດີ.*

**14** *ກ. ຄວາມເຊື່ອ ຂ. ສົງໄສ*

**ຄຳຕອບ (ຕໍ່):**

**15** *ກ. ຄວາມເຊື່ອ. ຂ. ຈະໄດ້.*

**16** *ນ້ຳພະໄທ… ພະເຈົ້າ.*

**17** *ນ້ຳພະໄທ… ພະເຈົ້າ*

**18** *ຊອກຫາແຕ່ນ້ຳພະໄທແລະເຊື່ອພ້ອມ ວ່າຈະເປັນໄປຕາມນ້ຳພະໄທນັ້ນ.*

**19** *ຂ. ຖືກ*

**20** *ກ. ນ້ຳພະໄທຂອງ ພະເຈົ້າ ຂ. ມີຄວາມເຊື່ອ (ວ່າຈະເປັນຕາມນ້ຳພະໄທ)*

**21** *ກ. ສະຫງົບ. ຂ. ສະຕິດີ. ຄ. ຟ້າວຟັ່ງ.*

**22** *ອ່ອນກຳລັງໃຈ*

**23** *ຂ. ຖືກ*

**24** *ກ. ຖືກ*

**25** *ມາຢູ່ເລື້ອຍ*

**26** *ຄ. ຖືກ*

**27** *ກ. ຖືກ*

**28** *ກ. ແລະ ຂ. ຂໍຢູ່ເລື້ອຍໆ ຈົນໄດ້.*

**29** *ຈົນໄດ້.*

**30** *ກ. ນ້ຳພະໄທຂອງ ພະເຈົ້າ. ຂ. ມີຄວາມເຊື່ອ. ຄ. ຈົນໄດ້.*

**31** *ພະວິນຍານບໍລິສຸດ*

**32** *ຂ. ຖືກ*

**33** *ພະວິນຍານບໍລິສຸດ*

**34** *ຕາມນ້ຳພະໄທຂອງ ພະເຈົ້າ*

**35** *ກ. ພະເຈົ້າ ຂ. ມີຄວາມເຊື່ອ ຄ. ຈົນໄດ້ ງ. ພະວິນຍານບໍລິສຸດ.*

**36** *ກ. ຊອກຫາບ່ອນສະຫງົບ ຂ. ຊອກຫາເວລາທີ່ຈະຕັ້ງສະຕິດີ ຄ. ຊອກຫາເວລາທີ່ບໍ່ຟ້າວຟັ່ງ*

**37** *ກ. ນ້ຳພະໄທຂອງ ພະເຈົ້າ. ຂ. ຄວາມເຊື່ອ. ຄ. ຈະໄດ້ ງ. ພະວິນຍານບໍລິສຸດ*